# ບົດຂອບໃຈ

ກະຊວງສຶກສາທິການ ແລະ ກິລາ ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງທຸກພາກສ່ວນພາຍໃນຂະແໜງການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ທຸກລະດັບ ນັບແຕ່ຂັ້ນສູນກາງເຖິງທ້ອງຖິ່ນ, ຄູ່ຮ່ວມພັດທະນາສາກົນ ແລະ ຜູ້ໃຫ້ທຶນ, ທີ່ໄດ້ໃຫ້ການຮ່ວມມືເປັນຢ່າງດີ ໃນການປະກອບສ່ວນແນວຄວາມຄິດ, ບົດຮຽນ, ປະສົບການອັນລ້ຳຄ່າ ເພື່ອພັດທະນານະໂຍບາຍ ແລະ ຍຸດທະສາດແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ ສະບັບນີ້ ໃຫ້ມີເນື້ອໃນທີ່ຄົບຖ້ວນ, ສົມບູນ ແລະ ສອດຄ່ອງກັບສະພາບຕົວຈິງຂອງ ສປປ ລາວ.

ພ້ອມກັນນີ້, ກະຊວງສຶກສາທິການ ແລະ ກິລາ ຂໍສະແດງຄວາມຂອບໃຈເປັນພິເສດມາຍັງອົງການອຸຍນີເຊັບປະຈຳ ສ.ປ.ປ ລາວ ແລະ ອົງການອຸຍແນສໂກ ບາງກອກ ທີ່ໄດ້ໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ ງົບປະມານ ໃນການພັດທະນາ, ຈັດພິມເຜີຍແຜ່ ແລະ ຜັນຂະຫຍາຍ ນະໂຍບາຍ ແລະ ຍຸດທະສາດແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມສະບັບນີ້ ໃຫ້ເປັນແຜນປະຕິບັດ ໃນຂັ້ນແຂວງ ແລະ ເມືອງ. ການຊ່ວຍເຫຼືອດັ່ງກ່າວ ນອກຈາກເປັນການປະກອບສ່ວນທີ່ສຳຄັນເຂົ້າໃນການສ້າງນະໂຍບາຍ ແລະ ຍຸດທະສາດສະບັບນີ້ແລ້ວ, ຍັງເປັນການປະກອບສ່ວນສ້າງຄວາມສາມາດ ໃຫ້ແກ່ພະນັກງານ ຂອງຂະແໜງການສຶກສາເວົ້າສະເພາະ, ເວົ້າລວມ ໃຫ້ແກ່ທຸກຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ອີກດ້ວຍ.

ກະຊວງສຶກສາທິການ ແລະ ກິລາ ຮັບຮູ້ວ່າ ປາສະຈາກການຊ່ວຍເຫຼືອ ແລະ ການຮ່ວມມືຈາກທຸກພາກສ່ວນ ກໍ່ຈະເປັນການຍາກທີ່ພວກເຮົາຈະບັນລຸເປົ້າໝາຍທີ່ວາງໄວ້ ດັ່ງນັ້ນ ກະຊວງສຶກສາທິການ ແລະ ກິລາ ຈຶ່ງຂໍຝາກຝັງໄວ້ນຳທຸກພາກສ່ວນ ໃນການນຳເອົານະໂຍບາຍ ແລະ ຍຸດທະສາດສະບັບນີ້ໄປເຜີຍແຜ່, ຜັນຂະຫຍາຍ ແລະ ປະຕິບັດໃຫ້ປະກົດຜົນເປັນຈິງ.

ກະຊວງສຶກສາທິການ ແລະ ກິລາ ມີຄວາມຍິນດີຕ້ອນຮັບທຸກຄຳເຫັນທີ່ສ້າງສັນເພື່ອເປັນບົດຮຽນ ແລະ ຫວັງຢ່າງຍິ່ງວ່າ ຈະໄດ້ຮັບການຮ່ວມມືຈາກທຸກພາກສ່ວນໃນການປັບປຸງ ແລະ ພັດທະນານະໂຍບາຍ ແລະ ຍຸດທະສາດການສຶກສາ ໃນອະນາຄົດ.

**ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ**

ດຣ ພັນຄຳ ວິພາວັນ